


# ທະນາຄານແຫ່ງ ສ ປ ປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ຕິດກາໝາຍການນຳໃຊ້ ແລະ QR code ລຶດຂອງລັດ



ໃນວັນທີ 11 ພະຈິກ 2022 ນີ້ ທີ່ທະນາຄານ ແຫ່ງ ສ ປ ປ ລາວ ສາຂາພາກເໜືອແຂວງຫຼວງພະບາງ ໄດ້ມີພິທີຕິດປ້າຍກາໝາຍການນຳໃຊ້ ແລະ QR code ລົດຂອງລັດຂຶ້ນ, ໂດຍການເຂົ້າຮ່ວມຂອງທ່ານ ນາງ ໂພທິຈັນ ທຳມະເທວາ ຫົວໜ້າທະນາຄານແຫ່ງ ສ ປ ປ ລາວ ສາຂາພາກໜືອແຂວງຫຼວງພະບາງ, ມີຮອງຫົວໜ້າຫ້ອງການທະນາຄານແຫ່ງສ ປ ປ ລາວ, ຕາງໜ້າກະຊວງການເງິນ ແລະພະນັກງານພາຍໃນທະນາຄານເຂົ້າຮ່ວມ.

ທ່ານ ນາງ ໂພທິຈັນ ທຳມະເທວາ ໃຫ້ຮູ້ວ່າ: ທະນາຄານແຫ່ງ ສ ປ ປ ລາວ ສາຂາພາກເໜືອແຂວງຫຼວງພະບາງ ແມ່ນສຳນັກງານທຳອິດຂອງແຂວງຫຼວງພະບາງທີ່ໄດ້ຕິດປ້າຍກາໝາຍການນຳໃຊ້ ແລະ QR code ລົດຂອງລັດຂຶ້ນກ່ອນໝູ່, ລາວຍັງເວົ້າຕື່ມວ່າຕົນເອງມີຄວາມພາກພູມໃຈຫຼາຍ ທີ່ໄດ້ ດຳເນີນຕິດແຜນກາໝາຍນຳໃຊ້ລັດຂອງລັດໃນຄັ້ງນີ້ ກໍ່ຄືໄດ້ປະຕິບັດຕາມດຳລັດສະບັບເລກທີ 599/ລບ, ລົງວັນທີ 29 ກັນຍາ 2021 ຂອງທະນາຄານແຫ່ງ ສ ປ ປ ລາວ ແລະເຊື່ອໝັ້ນວ່າ ພາຍໃຕ້ຜົນສຳເລັດການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ຈະເຮັດໃຫ້ການຄຸ້ມຄອງນຳໃຊ້ລົດຂອງລັດຖືກຕ້ອງຕາມລະບຽບການ ແລະກາຍເປັນໃບໜ້າໃໝ່ໃນການນຳໃຊ້ພາຫະນະ ລົດຂອງລັດ ທັງເປັນການຊຸກຍູ້ ການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິພາບ ແລະໄດ້ຮັບໝາກຜົນຫຼາຍຂຶ້ນກວ່າເກົ່າ.

ສຳລັບລົດຂອງລັດ ທີ່ທະນາຄານ ແຫ່ງ ສ ປ ປ ລາວ ຈະໄດ້ຕິດກາໝາຍນຳໃຊ້ ແລະ QR code ທັງໝົດ 149 ຄັນ, ໃນນັ້ນ ລົດບໍລິຫານ 48 ຄັນ, ລົດວິຊາສະເພາະຈຳນວນ 12 ຄັນ ແລະລົດບໍລິຫານລວມຂອງແຕ່ລະກົມ 19 ຄັນ ແລະ 5 ສາຂາພາກຈຳນວນ 89 ຄັນ, ສະເພາະ ສາຂາພາກເໜືອ ແຂວງຫຼວງພະບາງ ມີທັງໝົດ 15 ຄັນ ໃນນັ້ນ ມີລົດໃຫຍ່ 8 ຄັນ ແລະ ລົດຈັກ 7 ຄັນ.








**ຂ່າວ: ວຽງສະໄໝ ວັນວິໄລ**

**ພາບ: ສຸດທິສັກ ຫວັງສະຫວັດ**

ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ